ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 03 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 19 ມີນາ 2018

ສຳນັກງານ ຄຄຊ
ລົງເລກ 311
ວັນທີ 20 MAR 2018
ໂທລະສັບ 021 217770

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ກຸມພາ ປີ 2018 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I
## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ກຸມພາ 2018 ແລະ ທິດທາງແຜນການໃນເດືອນ ມີນາ 2018 ດັ່ງລາຍລະອຽດລຸ່ມນີ້:

### II. ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ.

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມສ່ອງແສງລາຍງານຕໍ່ຄະນະເລຂາທິການສູນກາງພັກ ປະຈຳເດືອນ ກຸມພາ 2018; ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ກຸມພາ 2018; ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ປະຈຳເດືອນ ກຸມພາ 2018; ກອງປະຊຸມວຽກງານກວດສອບງົບປະມານແຫ່ງລັດ ປະຈຳປີ 2017; ກອງປະຊຸມຄົບຄະນະເປີດກວ້າງຄະນະກຳມະທິການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່ ແລະ ເດັກ ປະຈຳປີ 2017; ກອງປະຊຸມທົບທວນການຮ່ວມມື ລະຫວ່າງ ສປປ ລາວ ກັບອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຢູ່ ສປປ ລາວ; ກອງປະຊຸມປຶກສາຫາລືກ່ຽວກັບລັດຖະບານສະຫະລັດອາເມລິກາ ປະກາດຂຶ້ນບັນຊີດຳບັນດານັກທຸລະກິດຢູ່ເຂດເສດຖະກິດພິເສດສາມຫຼ່ຽມທອງຄຳ;
- ສຳເລັດການຈັດກອງປະຊຸມຕ່າງໆ ແລະ ພິທີຕ່າງໆ: ກອງປະຊຸມການຈັດຕັ້ງຜັນຂະຫຍາຍຜົນສຳເລັດການດຳເນີນຊີວິດການເມືອງປັບປຸງປົວແປງພັກ ຢູ່ອົງຄະນະພັກທະນາຄານແຫ່ງ ສປປ ລາວ; ກອງປະຊຸມປຶກສາຫາລືວຽກງານຕິດຕາມການກວດກາການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ; ກອງປະຊຸມເຜີຍແຜ່ ແລະ ເຊື່ອມຊຶມບັນດາມະຕິກອງປະຊຸມຂອງສະພາແຫ່ງຊາດ, ດຳລັດຂອງນາຍົກລັດຖະມົນຕີ ແລະ ເອກະສານທີ່ສຳຄັນຈຳນວນໜຶ່ງ; ກອງປະຊຸມປຶກສາຫາລືກ່ຽວກັບການສ້າງນິຕິກຳ ເພື່ອຜັນຂະຫຍາຍດຳລັດວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ; ກອງປະຊຸມປຶກສາຫາລືວຽກງານປະເມີນຜົນປະຈຳປີການຈັດຕັ້ງປະຕິບັດວຽກງານຂອງພະນັກງານ ທຫລ ປະຈຳປີ 2017; ກອງປະຊຸມເຜີຍແຜ່ແຜນແມ່ບົດ ແລະ ແຜນຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານຕາມມາດຕະຖານບາເຊວແຕ່ປີ 2017-2025; ກອງປະຊຸມທະວິພາຄີລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານກາງມຽນມາ; ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ; ກອງປະຊຸມ

ຄະນະສະເພາະກິດຂອງລັດຖະບານໃນການແກ້ໄຂບັນຫາບໍລິສັດພິເອັສ ສົ່ງເສີມກະສິກຳ ແລະ ອຸດສາຫະກຳຄົບວົງຈອນ ຂາອອກ-ຂາເຂົ້າ;

- ສຳເລັດການຈັດຝຶກອົບຮົມ ແລະ ສຳມະນາໃນຫົວຂໍ້ຕ່າງໆ: ສຳມະນາໃນຫົວຂໍ້: "ຕະຫຼາດທຶນ";
- ສຳເລັດການຕ້ອນຮັບແຂກເຂົ້າພົບປະຄະນະນຳ ທຫລ ຂອງທ່ານ ຮອງປະທານສູນກາງແນວລາວສ້າງຊາດ; ຫ້ອງວ່າການສູນກາງພັກ; ທ່ານ ເອກອັກຄະລາຊະທູດ ຝຣັ່ງ ປະຈຳ ສປປ ລາວ; ທ່ານ ຫົວໜ້າຝ່າຍເສດຖະກິດຂອງຫ້ອງການ AMRO; ຄະນະຊ່ຽວຊານຈາກທະນາຄານໂລກ; ຄະນະຜູ້ບໍລິຫານຂັ້ນສູງຂອງທະນາຄານ Standard Charter ປະຈຳປະເທດໄທ;

## III. ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ.

- ໃນເດືອນ 02/2018 ສະພາບເສດຖະກິດສາກົນ ແລະ ພາກພື້ນແມ່ນມີລັກສະນະຄ້າຍຄືກັບເດືອນຜ່ານມາເຊັ່ນ: ສະພາບເສດຖະກິດໂລກ ແມ່ນຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍໄດ້ຮັບແຮງຍູ້ໜູນຂອງມູນຄ່າການສົ່ງອອກ ແລະ ມູນຄ່າການລົງທຶນ. ໃນຂົງເຂດອາຊີ ຄາດວ່າຈະຂະຫຍາຍຕົວໃນລະດັບ 6,5% ໃນປີ 2018 ແລະ 6,6% ໃນປີ 2019 ເນື່ອງຈາກໄດ້ຮັບແຮງຊຸກຍູ້ຈາກອຸປະສົງພາຍໃນປະເທດ ແລະ ຕະຫຼາດແຮງງານທີ່ຟື້ນຕົວດີຂຶ້ນຕໍ່ເນື່ອງ. ເຖິງຢ່າງໃດກໍ່ຕາມ, ໃນຂົງເຂດເອີຣົບຕາເວັນອອກສ່ຽງໃຕ້ ຄາດວ່າເສດຖະກິດຈະຂະຫຍາຍຕົວຊ້າ ໃນລະດັບ 2,3% ໃນປີ 2018 ແລະ 2,4% ໃນປີ 2019.
- ສຳລັບອັດຕາແລກປ່ຽນ: ເງິນໂດລາອ່ອນຄ່າ 3,33% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງ ສ.ອາເມລິກາ ອອກມາບໍ່ດີ ເຊິ່ງເຫັນໄດ້ຈາກຕົວເລກດັດຊະນີຄວາມເຊື່ອໝັ້ນຜູ້ບໍລິໂພກຂອງເດືອນ 01/2018 ຫຼຸດລົງມາຢູ່ທີ່ 94,4 ຈຸດ ຈາກ 95,9 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກລວມຍອດຜະລິດຕະພັນພາຍໃນຂອງໄຕມາດ 04/2017 ເພີ່ມຂຶ້ນພຽງແຕ່ 2,6% ຈາກເພີ່ມຂຶ້ນ 3,2% ໃນໄຕມາດຜ່ານມາ; ພ້ອມກັນນັ້ນ, ຕົວເລກຍອດຂາຍບ້ານໃໝ່ຂອງເດືອນ 12/2017 ຫຼຸດລົງມາເປັນ 9,3% ຈາກເພີ່ມຂຶ້ນ 15,0% ໃນເດືອນຜ່ານມາ ແລະ ປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງມີຈຳນວນ 1,95 ລ້ານຄົນ ຂອງອາທິດທີ 20/01/2018 ຈາກ 1,94 ລ້ານຄົນ ໃນອາທິດຜ່ານມາ;
- ສ່ວນລາຄານ້ຳມັນ ເພີ່ມຂຶ້ນ 6,11% ຈາກ 59,82 ໂດລາ/ບາເຣວ ມາເປັນ 63,47 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ຫຼຸດລົງ ຢ່າງຕໍ່ເນື່ອງມາເປັນ 1,07 ລ້ານບາເຣວ ໃນອາທິດທີ 19/01/2018 ໃນອາທິດຜ່ານມາ; ພ້ອມກັນນັ້ນ, ຜູ້ຜະລິດທັງໃນ ແລະ ນອກກຸ່ມໂອເປກໄດ້ສືບຕໍ່ດຳເນີນການປັບຫຼຸດກຳລັງການຜະລິດຢ່າງຕໍ່ເນື່ອງ, ໂດຍສະເພາະປະເທດເວເນຊູເອລ່າ ກຳລັງພົບກັບບັນຫາທາງດ້ານເສດຖະກິດພາຍໃນປະເທດ ເຮັດໃຫ້ຄວາມສາມາດໃນການຜະລິດນ້ຳມັນດິບຫຼຸດລົງຢ່າງຕໍ່ເນື່ອງ. ໃນດ້ານລາຄາຄຳ ເພີ່ມຂຶ້ນ 3,56% ຈາກ 1.291,01 ໂດລາ/ອອນ ມາເປັນ 1.336,92 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ, ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ ແລ້ວຫັນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ.

### 2. ສະພາບເງິນຕາພາຍໃນ.

- ອັດຕາເງິນເຟີ້ປະຈຳເດືອນ 2/2018 (ຕົວເລກຄາດຄະເນ) ຢູ່ໃນລະດັບ 0,99% ເພີ່ມຂຶ້ນຈາກ 0,95% ໃນເດືອນ 1/2018;
- ຖານເງິນຕາປະຈຳເດືອນ 2/2018 ເພີ່ມຂຶ້ນ 184,96 ຕື້ກີບ ຫຼື 0,49% ທຽບໃສ່ເດືອນ 1/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,61%. ປະລິມານເງິນ M2 ເພີ່ມຂຶ້ນ 686,21 ຕື້ກີບ ຫຼື 0,86% ທຽບໃສ່ເດືອນ 1/2018 ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7.786,02 ຕື້ກີບ ຫຼື 10,74%;

– ອັດຕາແລກປ່ຽນທີ່ວລະບົບໃນເດືອນ 2/2018 ທຽບເດືອນ 1/2018 ໝັ້ນຄົງໃນຂອບທີ່ກຳນົດໄວ້ ເຫັນໄດ້ຈາກ ເງິນກີບແຂງຄ່າ 0,16% ທຽບເງິນໂດລາ ແຕ່ອ່ອນຄ່າ 2,34% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບແຂງຄ່າ 0,21% ທຽບກັບເງິນໂດລາ ແຕ່ອ່ອນຄ່າ 2,75% ທຽບເງິນບາດ.

– ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 2/2018 (13/1/2018-12/02/2018) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດ ຫຼຸດລົງ 5,67% ຖ້າທຽບໃສ່ເດືອນ 1/2018. ທທກ ຊື້ເງິນຕາຕ່າງປະເທດ ສຸດທິ 16,73 ລ້ານໂດລາສະຫະລັດທຽບເທົ່າ (ໃນນັ້ນ, ຊື້ເງິນໂດລາສຸດທິ 82,14 ລ້ານໂດລາສະຫະລັດ, ແຕ່ຂາຍເງິນບາດສຸດທິ 2.016,68 ລ້ານບາດ ຫຼື 65,41 ລ້ານໂດລາສະຫະລັດທຽບເທົ່າ). ນອກນັ້ນ, ທຫລ ໄດ້ຊື້ເງິນຕາຕ່າງປະເທດຈາກ ທທກ ສຸດທິ 20,99 ລ້ານໂດລາສະຫະລັດ. ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 46,03 ລ້ານໂດລາສະຫະລັດທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາສະຫະລັດ 34,82 ລ້ານໂດລາສະຫະລັດ ແລະ ເງິນບາດ 345,59 ລ້ານບາດ ຫຼື 11,21 ລ້ານໂດລາສະຫະລັດ);

– ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 2/2018 (15/1/2018-12/02/2018) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 47,36 ລ້ານໂດລາສະຫະລັດ. ໃນນັ້ນ, ກະແສເງິນໄຫຼອອກຜ່ານລະບົບທະນາຄານ ຈຳນວນ 728,55 ລ້ານໂດລາສະຫະລັດ ເພື່ອຊຳລະຄ່ານຳເຂົ້າສິນຄ້າຂອງບັນດາວິສາຫະກິດ ຈຳນວນ 442,17 ລ້ານໂດລາສະຫະລັດ ແລະ ຊຳລະຄ່າບໍລິການ ຈຳນວນ 118,49 ລ້ານໂດລາສະຫະລັດ. ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 681,19 ລ້ານໂດລາສະຫະລັດ ຊຶ່ງສ່ວນໃຫຍ່ແມ່ນຮັບເງິນຈາກການສົ່ງອອກສິນຄ້າ ຈຳນວນ 231,29 ລ້ານໂດລາສະຫະລັດ, ຮັບຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 214,60 ລ້ານໂດລາສະຫະລັດ ແລະ ຮັບຈາກການບໍລິການ ຈຳນວນ 160,28 ລ້ານໂດລາສະຫະລັດ.

3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

– ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/2/2018 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 68.984,28 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 0,46% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,80%. ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 0,77% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 46,32% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ເພີ່ມຂຶ້ນ 0,19% ຊຶ່ງກວມເອົາ 53,68% ຂອງເງິນຝາກທັງໝົດ;

– ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/2/2018 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 67.124,79 ຕື້ກີບ ຫຼຸດລົງ 0,33% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,82%. ສິນເຊື່ອເປັນເງິນກີບ ກວມເອົາ 48,32% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດ ກວມເອົາ 51,68% ຂອງສິນເຊື່ອທັງໝົດ;

– ທະນາຄານນະໂຍບາຍ ປ່ອຍສິນເຊື່ອທັງໝົດ 4,48 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 81,96%, ເກັບຕົ້ນທຶນໄດ້ 25,35 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 4,52% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 2/2018 ມີຈຳນວນ 3.157,85 ຕື້ກີບ ເທົ່າກັບ 96,30% ຂອງແຜນການ (3.278,95 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.101,17 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 333,15 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 292,64 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 430,89 ຕື້ກີບ.

## 4. ການເຄື່ອນໄຫວຊໍາລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊໍາລະສະສາງ

ການຊໍາລະສະສາງດ້ວຍແຊັກຜ່ານສູນຊໍາລະສະສາງໃນເດືອນນີ້ ມີຈໍານວນ 5.883 ສະບັບ ເພີ່ມຂຶ້ນ 80,73% ເປັນເງິນຈໍານວນ 2.486,46 ຕື້ກີບ ເພີ່ມຂຶ້ນ 79,21% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈໍານວນ 183 ຄັ້ງ ເພີ່ມຂຶ້ນ 12,96% ເມື່ອທຽບໃສ່ເດືອນຜ່ານມາ ມີມູນຄ່າການໂອນ 744,74 ຕື້ກີບ ເພີ່ມຂຶ້ນ 15,38% ເມື່ອທຽບໃສ່ເດືອນຜ່ານມາ; ສໍາລັບການໂອນເງິນຜ່ານລະບົບຊໍາລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/1-24/2/2018 ມີຈໍານວນ 15.429 ຄັ້ງ ລາຍລະອຽດມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວ ຈໍານວນ 15.272 ຄັ້ງ ມີມູນຄ່າການໂອນ 4.556,23 ຕື້ກີບ ຫຼຸດລົງ 9,66% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກໍາຫຼາຍກວ່າໝູ່ ຈໍານວນ 4.578 ຄັ້ງ. ໃນນັ້ນ ມີ 42 ພາກສ່ວນທີ່ເຮັດທຸລະກໍາ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);
- **ກະຊວງການເງິນ:** ມີການເຄື່ອນໄຫວ ຈໍານວນ 157 ຄັ້ງ ມີມູນຄ່າການໂອນ 421,43 ຕື້ກີບ ເພີ່ມຂຶ້ນ 20,35%.

### 4.2 ການຊື້-ຂາຍພັນທະບັດ

- ໃນເດືອນ 2/2018 ພັນທະບັດກະຊວງການເງິນ ໄດ້ມີການຈໍາໜ່າຍພັນທະບັດບ້ວງລະດົມທຶນຜ່ານ ທຫລ ຈໍານວນ 330 ຕື້ກີບ. ໃນນັ້ນ, ຈໍາໜ່າຍໃຫ້ ທະນາຄານພົງສະຫວັນ ຈໍານວນ 5 ຕື້ກີບ, ທະນາຄານການຄ້າຕ່າງປະເທດ ມະຫາຊົນ ຈໍານວນ 300 ຕື້ກີບ, ທະນາຄານຮ່ວມທຸລະກິດລາວ-ຫວຽດ ຈໍານວນ 20 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ ຈໍານວນ 5 ຕື້ກີບ ແລະ ໄຖ່ຖອນພັນທະບັດບ້ວງດັ່ງກ່າວ ຈໍານວນ 304 ຕື້ກີບ. ໃນນັ້ນ, ໄຖ່ຖອນທະນາຄານພົງສະຫວັນ ຈໍານວນ 4 ຕື້ກີບ, ທະນາຄານການຄ້າຕ່າງປະເທດ ມະຫາຊົນ ຈໍານວນ 300 ຕື້ກີບ;
- ພັນທະບັດຂອງກະຊວງການເງິນ ມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.838 ຕື້ກີບ ແລະ 65 ລ້ານໂດລາສະຫະລັດ (ບ້ວງລະດົມທຶນ ທທກ ໂດຍກົງ 154 ຕື້ກີບ ແລະ 65 ລ້ານໂດລາສາຫະລັດ, ພັນທະບັດບ້ວງລ້າງໜີ້ 2.663 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 3.021 ຕື້ກີບ);
- ສໍາລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 2/2018 ມີການຈໍາໜ່າຍ ແລະ ໄຖ່ຖອນພັນທະບັດໃຫ້ທະນາຄານອຸດສະຫະກໍາ ແລະ ການຄ້າ ສປ ຈີນ ຈໍານວນ 20 ລ້ານໂດລາສະຫະລັດ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນ ທັງໝົດ 404 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

- ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 946,33 ຈຸດ ຫຼຸດລົງ 2,43% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 5,21% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 2.118.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 10,71 ຕື້ກີບ ເພີ່ມຂຶ້ນ 317,80% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 52,14% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີຕະຫຼາດຫຼັກຊັບລາວ ແມ່ນມາຈາກການປັບຕົວຫຼຸດລົງ ຂອງລາຄາຮຸ້ນ EDL Gen, PTL, SVN ແລະ PCD ເຊິ່ງເປັນຜົນມາຈາກການຂາຍຮຸ້ນຂອງຜູ້ລົງທຶນ ທີ່ກວມເອົາ 48,13% ຂອງມູນຄ່າການຊື້-ຂາຍທັງໝົດ.
- ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍ ປິດຕົວຢູ່ລະດັບ 5.900 ກີບ/ຮຸ້ນ ເພີ່ມຂຶ້ນ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 968.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,56 ຕື້ກວ່າກີບ ເພີ່ມຂຶ້ນ 857,55% ເມື່ອທຽບໃສ່ເດືອນຜ່ານມາ ເນື່ອງຈາກ BCEL ໄດ້ປະກາດກ່ຽວກັບການປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກໍານົດສິດຜູ້ຖືຮຸ້ນປະຈໍາປີ 2017 ເຮັດໃຫ້ນັກລົງທຶນພາກັນຊື້ຮຸ້ນເພີ່ມຂຶ້ນ ເພື່ອຫວັງເງິນປັນຜົນ;

- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍ ປິດຕົວຢູ່ລະດັບ 4.450 ກີບ/ຮຸ້ນ ຫຼຸດລົງ 150 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.132.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 5,13 ຕື້ກວ່າກີບ ເພີ່ມຂຶ້ນ 220,68% ເມື່ອທຽບໃສ່ເ 2017 ດືອນຜ່ານມາ ເນື່ອງຈາກ EDL-Gen ໄດ້ປະກາດກ່ຽວກັບການປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຜູ້ຖືຮຸ້ນປະຈຳປີເຮັດໃຫ້ນັກລົງທຶນພາກັນຊື້ຮຸ້ນເພີ່ມຂຶ້ນ ເພື່ອຫວັງເງິນປັນຜົນ;

- ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍ ປິດຕົວຢູ່ລະດັບ 6.600 ກີບ/ຮຸ້ນ ເພີ່ມຂຶ້ນ 1.600 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 600.000 ກີບ ຫຼຸດລົງ 68,83% ເມື່ອທຽບໃສ່ເດືອນຜ່ານມາ;

- ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍ ປິດຕົວຢູ່ລະດັບ 2.000 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 4.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 8,20 ລ້ານກີບ ຫຼຸດລົງ 64,04% ທຽບໃສ່ເດືອນຜ່ານມາ;

- ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍ ປິດຕົວຢູ່ລະດັບ 2.900 ກີບ/ຮຸ້ນ ຫຼຸດລົງ 50 ກີບ/ຮຸ້ນເມື່ອທຽບໃສ່ເດືອນຜ່ານມາ;

- ຮຸ້ນຂອງບໍລິສັດ ພູສີກໍ່ສ້າງ ມະຫາຊົນ (PCD) ມີລາຄາຊື້-ຂາຍ ປິດຕົວຢູ່ລະດັບ 1.500 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 13.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 20,01 ລ້ານກີບ ຫຼຸດລົງ 69,52% ເມື່ອທຽບໃສ່ເດືອນຜ່ານມາ.

## 6. ວຽກງານອື່ນໆ

– ໄດ້ອະນຸຍາດໃຫ້ທະນາຄານທຸລະກິດ ນຳເງິນເຂົ້າ ສປປ ລາວ ຈຳນວນ 84,71 ລ້ານໂດລາສະຫະລັດທຽບເທົ່າ, ຫຼຸດລົງ 23% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 77 ລ້ານໂດລາສະຫະລັດ ກວມເອົາ 91% ຂອງເງິນທັງໝົດ, ເງິນບາດ 183 ລ້ານບາດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 168,90 ລ້ານໂດລາສະຫະລັດທຽບເທົ່າ ຫຼຸດລົງ 26% ທຽບໃສ່ເດືອນຜ່ານມາ. ໃນນີ້ມີເງິນໂດລາສະຫະລັດ ຈຳນວນ 129,99 ລ້ານໂດລາສະຫະລັດ ກວມເອົາ 77% ຂອງເງິນທັງໝົດ, ເງິນບາດ 997,2 ລ້ານບາດ, 10.760 ເອີໂຣ, 7.710 ຝຣັ່ງສະວິດ, 11.155 ປອນສະເຕີລິງ, 14,31 ລ້ານເຢັນ, 3 ລ້ານຢວນ, 31.845 ໂດລາແຄນນາດາ, 38.335 ໂດລາອົດສະຕາລີ, ແລະ 3.000 ໂດລານິວຊີແລນ;

– ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການອອກໃບອະນຸຍາດສ້າງຕັ້ງສາຂາໃຫ້ແກ່ທະນາຄານເອຊີລີດາ ລາວ ຈຳກັດ ສາຂາສອງຄອນ; ສຳເລັດການອອກແຈ້ງການກ່ຽວກັບການຊຳລະຄ່າຄຸ້ມຄອງປະຈຳປີ 2018; ສຳເລັດການລົງກວດກາປະຈຳປີ 2018 ທະນາຄານທຸລະກິດ ຈານວນ 3 ແຫ່ງ; ສຳເລັດການອອກໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ ສກຈບ ສົມຫວັງທັນໃຈ; ສຳເລັດການອອກໃບອະນຸຍາດເປັນຕົວແທນບໍລິການໂອນເງິນຜ່ານລະບົບ Western union ຂອງບໍລິສັດ ລັດວິສາຫະກິດໄປສະນີລາວ;

– ໄດ້ສຳເລັດການຮັບຮອງຂໍ້ຕົກລົງວ່າດ້ວຍການກຳນົດລາຄາຮຸ້ນຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນທາງດ້ານຫຼັກການ;

– ໄດ້ຮັບທະນະບັດປອມ ປະເພດໃບ 50.000 ກີບ ຈຳນວນ 01 ໃບ ຈາກທະນາຄານທຸລະກິດ;

– ໄດ້ຮັບສຳນວນທຸລະກຳທີ່ໜ້າສົງໄສວ່າເປັນການຟອກເງິນ (STR) ຈາກທະນາຄານທຸລະກິດຈຳນວນ 15 ສະບັບ ເຊິ່ງຮອດປະຈຸບັນ STR ລວມທັງໝົດມີ 716 ສະບັບ.

<u>ພາກທີ II</u>

## <u>ວຽກງານຈຸດສຸມໃນເດືອນຕໍ່ໄປ</u>

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ຫັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ກຳນົດອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງ ເປັນຕົ້ນ: ຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນມູນຄ່າຍ່ອຍ; ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານ; ຂໍ້ຕົກລົງວ່າດ້ວຍຂອບເຂດການໃຫ້ສິນເຊື່ອຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການກວດສອບພາຍນອກ; ຂໍ້ຕົກລົງວ່າດ້ວຍການກູ້ຢືມເງິນຈາກຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າດ້ວຍຕົວແທນຜູ້ຖືຮຸ້ນກູ້; ຂໍ້ຕົກລົງວ່າດ້ວຍການຄອບຄອງກິດຈະການ; ຂໍ້ຕົກລົງວ່າດ້ວຍຕົວແທນຂຶ້ນທະບຽນຮຸ້ນກູ້. ພ້ອມກັນນັ້ນ, ກໍ່ໄດ້ສຸມໃສ່ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ; ກົດໝາຍວ່າດ້ວຍຫຼັກຊັບ ແລະ ກົດໝາຍວ່າດ້ວຍທະນາຄານທຸລະກິດ;

– ສືບຕໍ່ກະກຽມຮອບດ້ານສຳລັບການສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ;

– ສືບຕໍ່ກະກຽມຈັດກອງປະຊຸມຕ່າງໆ ຄື: ① ກອງປະຊຸມພົບປະທະນາຄານທຸລະກິດທົ່ວລະບົບກ່ຽວກັບວຽກງານຄຸ້ມຄອງ-ກວດກາ ປະຈຳປີ 2017; ② ກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ສະໄໝທີ III ປະຈຳປີ 2017; ກອງປະຊຸມສະຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງບັນດາຮາກຖານພັກ ເພື່ອກຳນົດທິດທາງ, ແຜນການ 2 ປີ ຕໍ່ໜ້າ. ③ ກອງປະຊຸມຄະນະກຳມະການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄຕມາດທີ I ປະຈຳປີ 2018; ④ ກອງປະຊຸມສະພາບໍລິຫານກອງທຶນປົກປ້ອງຜູ້ຝາກເງິນ ສະໄໝວິສາມັນ ຄັ້ງທີ I ປະຈຳປີ 2018; ⑤ ກອງປະຊຸມສະພາບໍລິຫານສະຖາບັນການທະນາຄານ ຄັ້ງທີ II ປະຈຳປີ 2017.

– ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສຳນັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ດຣ ສົມພາວ ໄຟສິດ